# ບົດທີ 25

## ສະຫລູບເລື່ອງຂ່າວປະເສີດຂອງພະເຍຊູ

*ໝາຍເຫດ: ໃນບົດຮຽນນີ້ເຮົາຈະສະຫລູບເລື່ອງທີ່ຮຽນມາກ່ອນ. ບົດຮຽນນີ້ປະກອບດ້ວຍຕາຕະລາງໃຫຍ່ທີ່ຈະຮວມ ເຫດການໃນຊີວິດຂອງພະເຍຊູເຂົ້າກັນ. ໃນບົດຮຽນນີ້ຈະຍົກຄໍາຖາມໃຫ້ທ່ານຕອບຕາມທີ່ເຄີຍຜ່ານມາ. ຄໍາຖາມໃດທີ່ທ່ານຕອບບໍ່ໄດ້ຈົ່ງເປີດເບິ່ງໃນຕາຕະລາງຈຶ່ງຕອບກໍໄດ້.*

**ຄໍາແນະນໍາ** ໃຫ້ອ່ານ ມັດທາຍ ບົດທີ 1
ລູກາ ບົດທີ 1
ໂຢຮັນ 1:1-18

*ຕະຫຼອດບົດທີ 25 ເປັນແຕ່ການສະຫລູບເລື່ອງສິ່ງທີ່ທ່ານຮຽນມາໃນຫຼັກສູດມັດທາຍເຫຼັ້ມ 1-5 ຈະຮຽນພ້ອມ ດ້ວຍໃຊ້ຕາຕະລາງໃຫຍ່. ແຕ່ຫົວທີນີ້ ເຮົາຈະເລີ້ມຕົ້ນຮຽນກ່ຽວກັບຄໍາແນະນໍາ.*

**1** ກ. ແມ່ນມັດທາຍບົດທີ 1 ຫຼື ລູກາບົດທີ 1 ທີ່ບັນທຶກລໍາດັບເຊື້ອວົງຂອງພະເຍຊູ? ________
ຂ. ລູກາບົດໃດບັນທຶກເລື່ອງທີ່ມາລີອາໄປຢ້ຽມຢາມເອລີຊາເບັດ? ________

**2** ກ. ແມ່ນຂ່າວປະເສີດເຫຼັ້ມໃດທີ່ບັນທຶກເລື່ອງເທວະດາປະກາດຕໍ່ມາລີອາ? ________
ຂ. ຂ່າວປະເສີດເຫຼັ້ມໃດບັນທຶກເລື່ອງເທວະດາປະກາດຕໍ່ໂຢເຊັບ? ________

**3** ກ. ເທວະດາປະກາດຕໍ່ທັງສອງໃນເມືອງໃດ? ________
ຂ. ຄໍາປະກາດຕໍ່ມາລີອາຕົກກ່ອນຄໍາປະກາດຕໍ່ໂຢເຊັບຈັກເດືອນ? ________
ຄ. ໃນເວລາ 3 ເດືອນນັ້ນ ນາງມາລີອາໄປຢ້ຽມຢາມໃຜ? ________
ງ. ໃນແຂວງໃດ? ________
ຈ. ຂ່າວປະເສີດເຫຼັ້ມໃດບັນທຶກເລື່ອງນັ້ນ? ________
ສ. ລູກາລາຍງານເລື່ອງການກໍາເນີດຂອງໃຜອີກ? ________

**4** ກ. ຂ່າວປະເສີດເຫຼັ້ມໃດບອກເລື່ອງເທວະດາມາທໍານວາຍຕໍ່ມາລີອາເລື່ອງພະກໍາເນີດ? ____
ຂ. ຂ່າວປະເສີດໃດບັນທຶກວ່າ ນາງມາລີອາໄປຢ້ຽມຢາມເອລີຊາເບັດ? ________
ຄ. ຂ່າວປະເສີດໃດລາຍງານເລື່ອງການກໍາເນີດຂອງໂຢຮັນບັບຕິສະໂຕ? ________
ງ. ຂ່າວປະເສີດໃດບອກລໍາດັບເຊື້ອວົງຂອງພະເຍຊູ ທາງທ່ານໂຢເຊັບ? ________
ຈ. ຂ່າວປະເສີດໃດບອກເລື່ອງເທວະດາທີ່ທໍານວາຍເລື່ອງພະກໍາເນີດໃຫ້ໂຢເຊັບຮູ້? ______

**5** ຂ່າວປະເສີດໂຢຮັນມີລັກສະນະແຕກຕ່າງກັນກັບຂ່າວປະເສີດ 3 ເຫຼັ້ມທໍາອິດ. ຄໍານໍາຂອງຂ່າວປະເສີດໂຢຮັນບໍ່ ກ່າວເຖິງເຫດການຕ່າງໆ ເມື່ອພະອົງເກີດ ແຕ່ບອກເຖິງສາເຫດທີ່ພະອົງມາ.
ກ. ໂຢຮັນ 1:1 ອ້າງເຖິງພະເຍຊູໂດຍໃຊ້ອັນໃດ? ________

ຂ. ພະເຢຊູຢູ່ກັບໃຜກ່ອນ? ______________________________

ຄ. ຢູ່ກັບພະເຈົ້າເມື່ອໃດ? ______________________________

ງ. ຕາມຂໍ້ນີ້ ພະທຳນັ້ນເປັນໃຜ? ______________________________

ຈ. ໂຢຮັນ 1:14 ອ້າງເຖິງເຫດການໃດ? ______________________________

| ໃຫ້ຂຽນຄຳ “ແນະນຳ” ກ່ອນໂຢຮັນ 1:1 ໃນພະຄຳພີຂອງທ່ານ ໂດຍສໍສີແດງ. |
|---|

**6** ກ. ໂຢຮັນບອກສາເຫດທີ່ໃຜມາຮັບຊາດເປັນມະນຸດ? ______________________________

ຂ. ແມ່ນຂ່າວປະເສີດສອງເຫຼັ້ມໃດທີ່ບັນທຶກເລື່ອງເຫດການແວດລ້ອມໃນເມື່ອພະເຢຊູມາເກີດ
ເປັນມະນຸດ? ______________________________ ແລະ ______________________________

**7** ກ. ຂ່າວປະເສີດເຫຼັ້ມໃດບອກສາເຫດທີ່ພະເຢຊູຮັບຊາດເປັນມະນຸດ? ______________

ຂ. ເຫຼັ້ມໃດບັນທຶກເລື່ອງການປະກາດຕໍ່ນາງມາລີອາ? ______________________________

ຄ. ເຫຼັ້ມໃດລາຍງານເລື່ອງທີ່ມາລີອາໄປຢ້ຽມຢາມເອລີຊາເບັດ? ______________________

ງ. ເຫຼັ້ມໃດບອກເລື່ອງທີ່ໂຢຮັນບັບຕິສະໂຕເກີດ? ______________________________

ຈ. ລຳດັບເຊື້ອວົງຂອງພະເຢຊູຕາມໂຢເຊັບເຫັນໃນເຫຼັ້ມໃດ? ______________________

ສ. ເລື່ອງທີ່ເທວະດາປະກາດຕໍ່ໂຢເຊັບເດ? ______________________________

**ສະໄໝໄວເດັກ** ໃຫ້ອ່ານ ມັດທາຍ ບົດ ທີ 2

ລູກາ 2:1-38



**8** ມີສອງຈຳພວກຄົນທີ່ໄປຢ້ຽມຢາມພະກຸມມານຄື:

* ຜູ້ລ້ຽງແກະ

* ພວກໂຫຣາຈານ

ທີ່ຜູ້ລ້ຽງແກະໄປກ່ອນພວກໂຫຣາຈານເປັນເວລາດົນ
ປານໃດ? ______________________________

*ໃຫ້ທ່ານເປີດເບິ່ງຕາຕະລາງໃຫຍ່ທີ່ຢູ່ກັບບົດນີ້
ແລ້ວສັງ ເກດເຫດການ ທັງ 6 ປະການໃນສ່ວນ “ສະໄໝໄວເດັກ”*

**9** ໃນສອງບົດທີ່ບັນທຶກເລື່ອງສະໄໝໄວເດັກຂອງພະອົງ

ກ. ເຫຼັ້ມໃດເລົ່າເລື່ອງຜູ້ລ້ຽງແກະ? ______________________________

ຂ. ເຫຼັ້ມໃດບັນທຶກເລື່ອງພວກໂຫຣາຈານ? ______________________________

**10** ໃຫ້ທ່ານຂຽນຂ່າວປະເສີດເຫຼັ້ມທີ່ກ່າວເລື່ອງຕໍ່ໄປນີ້:

ກ. ການຈົດທະບຽນສຳມະໂນຄົວທີ່ເຮັດໃຫ້ໂຢເຊັບແລະນາງມາລີອາເດີນທາງ
ໄປເບັດເລເຮັມ? ______________________________

ຂ. ພະກຳເນີດໃນຮາງຫຍ້າ? ______________________________

ຄ. ຜູ້ລ້ຽງແກະໄປຢັ້ງມຢາມ? ______________________________

ງ. ການຊຳລະຕົວຂອງມາລີອາແລະການໄປເຢລູຊາເລັມມາ? ______________

ຈ. ພວກໂຫຣາຈານໄປຢັ້ງມຢາມ? ______________________________

ສ. ເຂົາໄປປະເທດເອຢິບ? ______________________________

**11** ກ. ຖ້າຈະອ່ານເລື່ອງໃນສະໄໝໄວເດັກຂອງພະອົງຄວນອ່ານລູກາ ບົດ 2 ກ່ອນ ຫຼື ມັດທາຍ ບົດ 2 ກ່ອນ? ______________________________

ຂ. ແມ່ນຂ່າວປະເສີດສອງເຫຼັ້ມໃດທີ່ບໍ່ໄດ້ບັນທຶກເລື່ອງສະໄໝໄວເດັກ? __________ ແລະ ______________________________

**ສະໄໝໄວໜຸ່ມ** ໃຫ້ອ່ານ ລູກາ 2:39-52

*ເລື່ອງສະໄໝໄວໜຸ່ມຂອງພະອົງ ທີ່ບັນທຶກແຕ່ປະການດຽວໃນຂ່າວປະເສີດລູກາ. ໃຫ້ທ່ານເປີດເບິ່ງຕາຕະລາງໃຫຍ່ອີກແລ້ວອ່ານເລື່ອງໃນສີ່ຫຼ້ຽມນັ້ນ.*

**12** ກ. ຂ່າວປະເສີດໃດລາຍງານເລື່ອງສະໄໝໄວໜຸ່ມຂອງພະອົງ? ______________

ຂ. ຕອນນັ້ນ ພະເຢຊູອາຍຸຈັກປີ? ______________________________

ຄ. ແມ່ນຂ່າວປະເສີດ 3 ເຫຼັ້ມໃດທີ່ບໍ່ບອກຫຍັງກ່ຽວກັບສະໄໝໄວໜຸ່ມຂອງພະອົງ? ______________ ______________ ແລະ ______________

**13** ບັດນີ້ ເຮົາຈະຮຽນຄືນໃນເລື່ອງທີ່ສຶກສາມາເຖິງນີ້:



<u>ຄຳແນະນຳ</u>

ກ. ຂ່າວປະເສີດເຫຼັ້ມໃດບອກສາເຫດທີ່ພະອົງຮັບຊາດເປັນມະນຸດ? ______________________________

ຂ. ທີ່ເທວະດາທຳນວາຍເລື່ອງພະກຳເນີດຕໍ່ນາງມາລີອາ? ________

ຄ. ມາລີອາເດີນທາງໄປຢັ້ງມຢາມເອລີຊາເບັດ? ____________

ງ. ທີ່ໂຢຮັນບັບຕິສະໂຕເກີດ? ______________________

ຈ. ລຳດັບເຊື້ອວົງຂອງພະເຢຊູ ຕາມທາງໂຢເຊັບ? __________

ສ. ເທວະດາທຳນວາຍເລື່ອງພະກຳເນີດໃຫ້ໂຢເຊັບ? ________

<u>ສະໄໝໄວເດັກ</u>

ຊ. ເລື່ອງການຈົດທະບຽນສຳມະໂນຄົວເຂົາຈຶ່ງຕ້ອງໄປເບັດເລເຮັມ? ______________________________

ຍ. ພະກຳເນີດ? ______________________________

ດ. ຜູ້ລ້ຽງແກະໄປຢັ້ງມຢາມ? ______________________

ຕ. ການຊຳລະຕົວຂອງມາລີອາ ແລະການໄປເຢລູຊາເລັມມາ? ______________

ຖ. ໂຫຮາຈານໄປຢ້ຽມຢາມ? ______________________________

ທ. ເຂົາໄປປະເທດເອຢິບ? ______________________________

<u>ສະໄໝໄວເດັກ</u>

ນ. ພະອົງໄປໃນວິຫານເມື່ອອາຍຸ 12 ປີ? ______________________________

**ສະໄໝປີທີ່ຕຽມຕົວ** ໃຫ້ອ່ານ ມັດທາຍ 3:1 - 4:11 ລູກາ 3:1 - 4:30

ມະໂລໂກ 1:1-13 ໂຢຮັນ 1:9 - 4:54

**14** ໃນປີທີ່ຕຽມຕົວນີ້ ບ້ານຂອງພະອົງຍັງຢູ່ນາຊາເລັດແຂວງຄາລິເລຄືແຕ່ກ່ອນ ແຕ່ພະອົງໄປປະກາດພະທຳທາງ ພາກໃຕ້ເປັນຕົ້ນ.

ກ. ພະອົງໄປປ່າວປະກາດແຄມຝັ່ງແມ່ນ້ຳໃດ? ______________________________

ຂ. ຢູ່ຮ່ວມກັບໃຜ? ______________________________

ຄ. ໃນສອງແຂວງໃດ? ______________________________

**15** ຂ່າວປະເສີດ 3 ເຫຼັ້ມທຳອິດບັນທຶກເລື່ອງຄ້າຍຄືກັນໃນປີນີ້ ເຂົາລາຍງານເລື່ອງເຫດການ 3 ປະການເປັນຕົ້ນຄື:

ກ. ຄຳເທດສະໜາຂອງໃຜ? ______________________________

ຂ. ພະເຢຊູຮັບສິນຫຍັງ? ______________________________

ຄ. ໃຜຖືກການທົດລອງ? ______________________________

ງ. ຂ່າວປະເສີດໂຢຮັນບໍ່ໄດ້ບັນທຶກເລື່ອງທັງສາມປະການນັ້ນ. ເພິ່ນບັນທຶກແຕ່ເລື່ອງໃດໃນໂຢຮັນ 1:19-28? ______________________________

**16** ໃນຂ່າວປະເສີດທັງ 4 ເຫຼັ້ມ ສະໄໝປີທີ່ຕຽມຕົວເລີ້ມຕົ້ນໂດຍເຫດການດຽວຄືເຫດການໃດ?

______________________________

| | | |
|---|---|---|
| ໃຫ້ທ່ານໝາຍຂໍ້ທີ່ເລີ້ມຕົ້ນສະໄໝປີທີ່ຕຽມຕົວກ່ອນ ມທ 3:1 ໃຫ້ທ່ານຂຽນຄຳວ່າ "ສະໄໝປີທີ່ຕຽມຕົວ" ກ່ອນຂໍ້ຕໍ່ໄປນີ້: | ມາລະໂກ | 1:1 |
| | ລູກາ | 3:1 |
| | ໂຢຮັນ | 1:19 |



**17** ໃນເລື່ອງສະໄໝປີທີ່ຕຽມຕົວ ຂ່າວປະເສີດໂຢຮັນບັນທຶກເຫດການຫຼາຍປະການທີ່ຂ່າວປະເສີດອີກ 3 ເຫຼັ້ມບໍ່ ບອກ. ອັນໜຶ່ງເຫັນໃນ ໂຢຮັນ 2:13 ວ່າການຊຳລະພະວິຫານເທື່ອທຳອິດ (ເໝືອນດັ່ງການຊຳລະເທື່ອທີສອງ) ໃກ້ເທດສະການໃດ? ______________________________

ໃຫ້ທ່ານຂີດສີແດງກ້ອງຄຳ "ເຫດສະການປັດສະຄາ" ໃນໂຢຮັນ 2:13
ແລ້ວຂຽນຄຳວ່າ "ເຫດສະການປັດສະຄາເທື່ອທຳອິດ" ໃສ່ຂ້າງຂໍ້ນັ້ນດ້ວຍ.

**18** ລູກາ 4:16-36 ລາຍງານເລື່ອງເຫດການອີກປະການໜຶ່ງທີ່ຂ່າວປະເສີດເຫຼັ້ມອື່ນໆ ບໍ່ບອກຄື ເລື່ອງຫຍັງ? ______

*ໃຫ້ທ່ານເປີດເບິ່ງຕາຕະລາງໃຫຍ່ທີ່ມີຢູ່ກັບບົດນີ້. ຊ່ອງຫວ່າງໃດໃນຕາຕະລາງນັ້ນທີ່ມີເສັ້ນແຍງມູມປິດສະ ແດງວ່າບໍ່ມີການບັນທຶກເລື່ອງໄວ້ໃນຂ່າວປະເສີດນັ້ນ. ເພື່ອຄຳຕອບຕໍ່ໄປນີ້ໃຫ້ທ່ານເປີດເບິ່ງຕາຕະລາງນັ້ນກໍໄດ້.*

**19** ກ. ມັດທາຍລາຍງານເລື່ອງງານສົມລົດທີ່ບ້ານການາບໍ່? ______
ຂ. ມາລະໂກບັນທຶກເລື່ອງທີ່ພະເຢຊູຮັບບັບຕິສະມາບໍ່? ______
ຄ. ລູກາບອກເລື່ອງທີ່ໄທນາຊາເລັດບໍ່ຕ້ອນຮັບພະອົງບໍ່? ______
ງ. ໂຢຮັນເວົ້າເລື່ອງການທົດລອງຂອງພະອົງບໍ່? ______



**20** ຂ່າວປະເສີດ 3 ເຫຼັ້ມທຳອິດບັນທຶກເຫດການສາມປະການໃດ?
ກ. ເລື່ອງ ______
ຂ. ເລື່ອງ ______
ຄ. ເລື່ອງ ______

**21** ກ. ໃນເຫດການ 3 ປະການ ພະທຳໂຢຮັນບັນທຶກເລື່ອງໃດ? ______
ຂ. ແມ່ນຂ່າວປະເສີດເຫຼັ້ມໃດທີ່ບັນທຶກເລື່ອງສະໄໝປີທີ່ຕຽມຕົວຫຼາຍກວ່າໝູ່? ______
ຄ. ບັນທຶກໃນບົດໃດແດ່? ______
ງ. ເຫດການສຸດທ້າຍໃນປີທີ່ມີຊື່ສຽງຄືເຫດການໃດ? ______
ຈ. ເຫດການນັ້ນບັນທຶກໄວ້ໃນຂ່າວປະເສີດເຫຼັ້ມໃດ? ______

| | | | |
|---|---|---|---|
| **ສະໄໝປີທີ່ມີຊື່ສຽງ** | ໃຫ້ອ່ານ | ມັດທາຍ | 4:12 ເຖິງ 13:58 |
| | | ມາລະໂກ | 1:14 - 6:13 |
| | | ລູກາ | 4:31 - 9:6 |

**22** ກ. ໃນສຸດທ້າຍຂອງປີທີ່ຕຽມຕົວພະອົງຖືກໄລ່ອອກຈາກໃສ? ______
ຂ. ໃນຕົ້ນປີທີ່ຊື່ສຽງພະອົງໄປຢູ່ຝັ່ງທະເລສາບໃນເມືອງໃດ? ______
ຄ. ເມືອງນັ້ນຢູ່ແຂວງໃດ? ______
ງ. ຢູ່ຝັ່ງທະເລສາບໃດ? ______
ຈ. ແມ່ນເຮໂລດອົງໃດທີ່ປົກຄອງແຂວງຢູດາໃນສະໄໝນັ້ນ?
______
ສ. ເຮໂລດນັ້ນຂັງຜູ້ໃດໄວ້ໃນຄຸກ? ______



ຊ. ເພາະເຫດນັ້ນ ພະເຍຊູບໍ່ໄດ້ກັບໄປປ່າວປະກາດໃນບ່ອນທີ່ເຄີຍ ປ່າວປະກາດກັບໂຢຮັນຄື ຣິມແມ່ນ້ຳໃດ? ______________________________

ຍ. ພະອົງຢູ່ປ່າວປະກາດໃນແຂວງໃດ? ______________________________

ດ. ຫຼາຍຄົນມາຟັງພະອົງເທດສະໜາເລື່ອງອານາຈັກໃດ? ______________________________

**23** ມີເຫດການ 2 ປະການທີ່ສະແດງການເລີ້ມຕົ້ນຂອງສະໄໝປີທີ່ມີຊື່ສຽງຄື:

* ພະອົງຈາກນາຊາເລັດໄປຢູ່ກາເປນາອູມ
* ໂຢຮັນບັບຕິສະໂຕຖືກຂັງໄວ້ໃນຄຸກ

ກ. ເຫັນປະການໃດໃນ ມາລະໂກ 1:14? ______________________________

ຂ. ປະການໃດໃນ ລູກາ 4:31? ______________________________

| ໃຫ້ທ່ານຂຽນຄຳວ່າ "ປີທີ່ມີຊື່ສຽງ" ໃສ່ໃນເຈ້ຍຂ້າງສອງຂໍ້ນັ້ນ. |
|---|

*ພະທຳມັດທາຍທີ່ລາຍງານຫຼາຍທີ່ສຸດເລື່ອງສະໄໝປີທີ່ພະອົງມີຊື່ສຽງ. ໃນຕາຕະລາງໃຫຍ່ຈະເຫັນມັດທາຍຍົກ ເລື່ອງຄຳສອນຂອງພະເຍຊູ ກ່ຽວກັບອານາຈັກ.*

**24** ການບັນທຶກຂອງມາລະໂກກັບລູກາ ຄ້າຍຄືກັນກັບມັດທາຍ. ສ່ວນໂຢຮັນເພີ່ນບໍ່ລາຍງານເລື່ອງໃນແຂວງຄາລີ ເລແຕ່ໂຢຮັນບັນທຶກເລື່ອງປະການໜຶ່ງໃນພາກໃຕ້ສະໄໝນັ້ນ.

ໃຫ້ອ່ານໂຢຮັນ 5:1

ກ. ພະອົງໄປໃສ? ______________________________

ຂ. ພະອົງໄປຫຍັງ? ______________________________

ຄ. ເຮົາຮູ້ຊື່ຂອງເທດສະການນັ້ນບໍ່? ______________________________

**25** ພະຄຳພີບໍ່ໄດ້ບອກຊື່ຂອງເທດສະການນັ້ນແຕ່ມີນັກສາດສະໜາສາດບາງຄົນທີ່ຄິດວ່າອາດຈະເປັນເທດສະການ ປັດສະຄາເທື່ອທີສອງ. ຖ້າບໍ່ດັ່ງນັ້ນຄວນເປັນເທດສະການທີ່ຕົກໃນລະດູໃກ້ກັນກັບເທດສະການປັດສະຄາເທື່ອທີ ສອງເຊິ່ງເລີ້ມຕົ້ນໃນສະໄໝປີທີ່ມີຊື່ສຽງ.

ໃນບ່ອນນັ້ນພະເຍຊູໂຜດຄົນເຈັບໜຶ່ງທີ່ປ່ວຍມາ 38 ປີ ໃນໂຢຮັນ5:2. ໃນພາສາເຮັບເລີເຂົາເອີ້ນສະນັ້ນວ່າຢ່າງ ໃດ? ______________________________



**26** ກ. ເຫັນເລື່ອງທີ່ພະເຢຊູໄປເທດສະການ ແຕ່ບໍ່ບອກຊື່ເທດສະການ ໃນໂຢຮັນ ບົດແລະຂໍ້ໃດ? ______________________

ຂ. ເທດສະການນັ້ນກົງກັນກັບການເລີ້ມຕົ້ນຂອງສະໄໝປີໃດ? ______________

| | |
|---|---|
| 1. | ໃຫ້ທ່ານຂີດສີແດງກ້ອງຄຳ "ເທດສະການ" ໃນໂຢຮັນ 5:1 ແລ້ວຂຽນຄຳ "ເທດສະການເທື່ອທີສອງ" ຢູ່ຂ້າງເຈ້ຍໃບນັ້ນ. |
| 2. | ໃຫ້ຂຽນ "ປີທີ່ມີຊື່ສຽງ" ກາງໜ້ານັ້ນກ່ອນ ໂຢຮັນ 5:1 ດ້ວຍ. |

**27** ໃຫ້ເຮົາສະຫລູບຄືນອີກໃນເຫດການທີ່ຮຽນມາແລ້ວ.

<u>ຄຳແນະນຳ</u>

ກ. ສາເຫດທີ່ພະເຢຊູຮັບຊາດເປັນມະນຸດບັນທຶກໄວ້ໃນພະທຳເຫຼັ້ມໃດ? __________

ຂ. ເທວະດາປະກາດເລື່ອງພະກຳເນີດໃຫ້ນາງມາລີອາເດ? ______________

ຄ. ມາລີອາໄປຢັ້ງມຢາມເອລີຊາເບັດ? ______________________

ງ. ການກຳເນີດຂອງໂຢຮັນບັບຕິສະໂຕ? ______________________

ຈ. ລຳດັບເຊື້ອວົງຂອງພະເຢຊູ ຕາມທາງໂຢເຊັບ? __________________

ສ. ເທວະດາປະກາດໃຫ້ໂຢເຊັບ? ________________________

<u>ສະໄໝໄວເດັກ</u>

ຊ. ການຈົດທະບຽນ ແລະການເດີນທາງໄປເບັດເລເຮັມ? ______________

ຍ. ພະກຳເນີດໃນຮາງຫຍ້າ? ________________________

ດ. ຜູ້ລ້ຽງແກະໄປຢັ້ງມຢາມ? ________________________

ຕ. ການຊຳລະຕົວຂອງມາລີອາ ແລະ ການໄປ ເຢລູຊາເລັມມາ? ______________

ຖ. ພວກໂຫຮາຈານໄປຢັ້ງມຢາມ? __________

ທ. ເຂົາໄປປະເທດເອຢິບ? ____________

<u>ສະໄໝໄວໜຸ່ມ</u>

ນ. ທີ່ພະເຢຊູຢູ່ໃນພະວິຫານເມື່ອອາຍຸ 12 ປີ? ____



**28** ໃນເລື່ອງຕໍ່ໄປນີ້

* ເຫດການໃດທີ່ບັນທຶກໄວ້ໃນຂ່າວປະເສີດທັງ 4 ເຫຼັ້ມໃຫ້ຂຽນ "ທັງ 4"

* ເຫດການໃດທີ່ບັນທຶກໄວ້ໃນ 3 ເຫຼັ້ມທຳອິດໃຫ້ຂຽນຄຳ "3 ທຳອິດ"

* ເຫດການໃດທີ່ບັນທຶກໄວ້ໃນສະເພາະລູກາຫຼືໂຢຮັນໃຫ້ຂຽນແຕ່ຊື່ຂອງພະທຳ ທີ່ລາຍງານໄວ້.

<u>ສະໄໝປີທີ່ຕຽມຕົວ</u>

ກ. ການເທດສະໜາຂອງໂຢຮັນບັບຕິສະໂຕ? ______________________________

ຂ. ພະເຢຊູຮັບສິນບັບຕິສະມາ? ______________________________________

ຄ. ພະເຢຊູຖືກການທົດທອງ? ________________________________________

ງ. ໄທນາຊາເລັດບໍ່ຕ້ອນຮັບພະເຢຊູ? __________________________________

<u>ສະໄໝປີທີ່ມີຊື່ສຽງ</u>

ຈ. ຊົງໂຜດຄົນໜຶ່ງຢູ່ແຄມສະໃຫ້ດີພະຍາດ? _______________________________

ສ. ຊົງປະກາດພະທຳຢູ່ແຂວງຄາລີເລ? _______________________________

**ສະໄໝປີທີ່ສຳເລັດ** ໃຫ້ອ່ານ

| | |
|---|---|
| ມັດທາຍ | ບົດ 14 ເຖິງ 27 |
| ມະໂລໂກ | 6:14 - 15:47 |
| ລູກາ | 9:7 - 23:56 |
| ໂຢຮັນ | ບົດ 6 ເຖິງ 19 |

**29** ປີທີ່ສຳເລັດແບ່ງເປັນສອງຍຸກໃດ? (ຍຸກລະ 6 ເດືອນ)

______________________________ ______________________________

**30** ກ. ໃນ 6 ເດືອນທຳອິດສະໄໝປີທີ່ສຳເລັດ ພະອົງພັກຢູ່ໃນເມືອງໃດ? _______________

ຂ. ເດີນທາງອອກຈາກແຂວງໃດ 3 ເທື່ອ? ________________________________

ຄ. ທັງ 3 ເທື່ອນັ້ນພະອົງຈາກໄປເພື່ອຈະຫຼີກເວັ້ນຈາກຜູ້ຕໍ່ສູ້. ບໍ່ແມ່ນພະອົງຢ້ານເຂົາແມ່ນແຕ່ບໍ່ເຖິງເວລາທີ່ ພະ ອົງຈະຕາຍເທື່ອ. 6 ເດືອນທຳອິດນັ້ນເຮົາເອີ້ນວ່າເປັນຍຸກໃດ? ______

**31** ກ. ໃນທ້າຍສຸດຂອງຍຸກນັ້ນ ພະອົງລາຈາກບ່ອນທີ່ເຄີຍຢູ່ໃນເມືອງແລະແຂວງໃດ?

__________________________________________________________

ຂ. ພະອົງລາຈາກກາເປນາອູມໄປໃນທີ່ສິ້ນສຸດຂອງຍຸກໃດ? _____________________

ຄ. ໃນສະໄໝປີໃດ? ______________________________________________

ງ. 6 ເດືອນສຸດທ້າຍໃນປີນັ້ນຄືຍຸກໃດ? _______________________________

**32** ກ. ໃນແຜນທີ່ຕໍ່ໄປນີ້ ແຜນທີ່ຂ້າງຊ້າຍສະແດງເຖິງຍຸກໃດ? ____________________

ຂ. ໃນຍຸກນັ້ນ ພະອົງເດີນທາງ 3 ເທື່ອຈາກເມືອງໃດ? ____________________

ຄ. ແຜນທີ່ຂ້າງຂວາສະແດງເຖິງຍຸກໃດ? ____________________

ງ. ໃນຍຸກນັ້ນພະອົງເດີນທາງໄປກຸງໃດ 3 ເທື່ອ? ____________________




**ຍຸກທີ່ຖອຍອອກ**

*ມັດທາຍລາຍງານເລື່ອງຍຸກທີ່ຖອຍອອກ ຕັ້ງແຕ່ບົດທີ 14 ເຖິງ 18. ບອກເຖິງການເດີນທາງທັງ 3 ເທື່ອ. ໃຫ້ທ່ານ ເປີດເບິ່ງຫຼັກສູດມັດທາຍເຫຼັ້ມທີ 4 ທີ່ທ່ານຮຽນມາກ່ອນແລ້ວເປີດໜ້າ 10 ເຊິ່ງເປັນແຜນທີເລື່ອງການເດີນທາງ ຈາກຄາລີເລ 3 ເທື່ອ. ຈົ່ງເປີດແຜນທີ່ໄວ້ກ່ອນຈະຕອບຄໍາຖາມຕໍ່ໄປນີ້.*

**33** ພະອົງເດີນທາງເທື່ອທໍາອິດຫຼັງຈາກໂຢຮັນບັບຕິສະໂຕຕາຍແລ້ວ, ພະອົງອອກຈາກກາເປນາອູມ. ໝາຍໄວ້ດ້ວຍ ຕົວອັກສອນ “ງ”). ພະອົງຂ້າມເຮືອໄປເຂດເບັດຊາອີດາ ລ້ຽງ 5000 ຄົນ ແລ້ວກັບໄປກາເປນາອູມອີກ.

ກ. ໃນເມື່ອທ່ານຮຽນຫຼັກສູດ ມັດທາຍ ເຫຼັ້ມທີ 4 ທ່ານ ໝາຍເສັ້ນເດີນທາງເທື່ອທໍາອິດນັ້ນໂດຍໃຊ້ສີໃດ? ____________________

ຂ. ອັກສອນໃດໝາຍເບັດຊາອີດາ? ____________________

**34** ພະອົງເດີນທາງເທື່ອທີສອງ ຫຼັງຈາກການໂຕ້ຖຽງກັນກັບພວກຟາລີຊາຍເລື່ອງຄໍາສອນທີ່ຕົກທອດຈາກບູຮານ. ເທື່ອທີສອງນີ້ພະອົງຖອຍອອກໄປເມືອງຕີໂລແລະຊີໂດນໃນປະເທດຟອຍນີເກ ຮິມທະເລເມລີແຕລາເນ.ໃນບ່ອນ ນັ້ນ ພະອົງໂຜດລູກຂອງຍິງຊາດການາອານ. ຕໍ່ໄປພະອົງໄປເມືອງເດກາໂປລີແລ້ວຂ້າມນໍ້າກັບເຂົ້າແຂວງຄາລີ ເລ ອີກ.

ກ. ການເດີນທາງເທື່ອທີສອງ ໝາຍໄວ້ດ້ວຍເສັ້ນສີໃດ? ____________________

ຂ. ປະເທດຟອຍນີເກ ໝາຍໄວ້ດ້ວຍຕົວອັກສອນໃດ? ____________________

**35** ເທື່ອທີ 3 ພະອົງເດີນທາງຫຼັງຈາກໂຕ້ຖຽງກັນກັບພວກຟາລີຊາຍກ່ຽວກັບ ໝາຍສຳຄັນ. ພະອົງເດີນໄປທາງ ເໜືອເຂົ້າແຂວງອີຕູລາຍໄປເມືອງກາຍຊາເລຍຟີລິບປອຍແລະພູເຮໂມນ. ໃນອາທິດນັ້ນພະຄຳພີບັນທຶກເລື່ອງ 3 ປະການຄື:

* ເປໂຕຍອມຮັບວ່າພະເຢຊູຊົງເປັນພະຄຼິດ
* ຊົງປ່ຽນລັກສະນະພະກາຍ
* ຊົງໂຜດເດັກນ້ອຍມີຜີສິງ

ກ. ເສັ້ນເດີນທາງເທື່ອທີ 3 ນັ້ນໝາຍໄວ້ໃນແຜນທີ່ດ້ວຍສີໃດ? ____________________

ຂ. ຕົວອັກສອນໃດ ໝາຍເມືອງກາຍຊາເລຍຟີລິບປອຍ? ________________________

ຄ. ອັກສອນໃດໝາຍພູເຮໂມນ? ________________________________________

**36** ຂ່າວປະເສີດມາລະໂກແລະມັດທາຍລາຍງານກ່ຽວກັບການເດີນທາງຈາກຄາລີເລທັງ 3 ເທື່ອຄື: (ຕື່ມຄວາມທີ່ຂາດ)

ກ. ໄປເບັດ ________________________________________________________

ຂ. ໄປປະເທດ ______________________________________________________

ຄ. ໄປເມືອງກາຍ ____________________________ ແລະພູ ___________________

ລູກາ ລາຍງານແຕ່ເລື່ອງເທື່ອທຳອິດແລະເທື່ອສຸດທ້າຍຄື:

ງ. ເບັດ __________________________________________________________

ຈ. ໄປ ______________________________________ ແລະ ______________________

ໂຢຮັນບອກແຕ່ເລື່ອງການເດີນທາງເທື່ອທຳອິດຄື:

ສ. ໄປ ___________________________________________________________

**37** ຂ່າວປະເສີດທັງ 4 ເຫຼັ້ມບັນທຶກເລື່ອງການເດີນທາງໄປໃສ? _______________________

**38** ເຖິງວ່າໂຢຮັນບັນທຶກເລື່ອງການເດີນທາງໄປເບັດຊາອີດາແຕ່ບ່ອນດຽວກໍຕາມ ແຕ່ໂຢຮັນນັ້ນບັນລະຍາຍຢ່າງລະ ອຽດໃນ 4 ຢ່າງຄື:

ກ. ໂຢຮັນ 6:4 ບອກວ່າໃກ້ຈະເຖິງເທດສະການໃດ? __________________________

ຂ. ຂໍ້ 15 ບອກວ່າປະຊາຊົນຢາກຕັ້ງພະເຢຊູເປັນຫຍັງ? _________________________

ຄ. ໃນຂໍ້ 35 ພະເຢຊູບອກວ່າເປັນອາຫານຢ່າງໃດ? ____________________________

ງ. ໃນຂໍ້ 66 ເຫັນວ່າພວກລູກສິດຂອງພະອົງຫຼາຍຄົນເຮັດຫຍັງ? ___________________

**39** ມີເຫດການດຽວໃນຍຸກທີ່ພະເຢຊູຖອຍອອກຊຶ່ງໄດ້ລາຍງານໃນຂ່າວປະເສີດທັງ 4 ເຫຼັ້ມ.



ກ. ໃນເຫດການນັ້ນພະອົງເດີນທາງໄປໃສ? _________________

ຂ. ເຮັດການອັດສະຈັນໃດ? ____________________________

ຄ. ໃກ້ກັບເທດສະການໃດ? _____________________________

| |
|---|
| ໃຫ້ທ່ານຂີດສີແດງກ້ອງຄຳ "ປັດສະຄາ" ໃນໂຢຮັນ 6:4<br>ແລ້ວ ຂຽນຄຳວ່າ "ປັດສະຄາເທື່ອທີ 3" ໃສ່ຂອບເຈ້ຍໜ້ານັ້ນ. |

**40** ໃຫ້ທ່ານຈົ່ງຈື່ໄວ້ວ່າມີເຫດການ 2 ປະການໃນເມື່ອພະອົງເດີນທາງເທື່ອທຳອິດຕົ້ນຍຸກທີ່ຖອຍອອກຄື:

* ຄວາມຕາຍຂອງໂຢຮັນບັບຕິສະໂຕ
* ການລ້ຽງ 5000 ຄົນ

ກ. ໃນມາລະໂກ ບົດທີ 6 ລາຍງານເລື່ອງເຫດການໃດ? ___________________________

| |
|---|
| ໃຫ້ຂຽນຄຳ "ປີທີ່ສຳເລັດ ຍຸກຖອຍອອກ" ກ່ອນ ມາລະໂກ 6:14 ໃນພະຄຳພີໂດຍໃສ່ສໍສີແດງ |

ຂ. ລູກາ ບົດທີ 9 ບັນທຶກເລື່ອງເຫດການໃດ? ___________________________________

| |
|---|
| ໃຫ້ຂຽນຄຳ "ປີທີ່ສຳເລັດ ຍຸກຖອຍອອກ" ກ່ອນ ລູກາ 9:7 |

ຄ. ໂຢຮັນ ບົດທີ 6 ບັນທຶກເລື່ອງໃດ? ________________________________________

| |
|---|
| ໃຫ້ຂຽນຄຳ "ປີທີ່ສຳເລັດ ຍຸກຖອຍອອກ" ກ່ອນ ໂຢຮັນ 6:1 |

## ຍຸກທີ່ເສຍສະຫຼະ

*ມັດທາຍເລີ້ມຕົ້ນລາຍງານເລື່ອງຍຸກທີ່ເສຍສະຫຼະໃນ ມທ 19:1 ທີ່ພະອົງເຂົ້າກຸງເຢລູຊາເລັມໃນແຂວງຢູດາ*

**41** ກ. ໃນມາລະໂກ 10:1 ພະເຢຊູຈະເຂົ້າໄປແຂວງໃດ? _____________________________

| |
|---|
| ໃຫ້ຂຽນຄຳ "ປີທີ່ສຳເລັດ ຍຸກເສຍສະຫຼະ" ກ່ອນ ມາລະໂກ 10:1 |

ຂ. ໃນ ລູກາ 9:51 ພະອົງຈະໄປສູ່ກຸງໃດ? ______________________________________

| |
|---|
| ໃຫ້ຂຽນຄຳດຽວກັນນັ້ນໃສ່ກ່ອນ ລູກາ 9:51 |

ຄ. ໃນ ໂຢຮັນ 7:10 ພະອົງຈະໄປເທດສະການໃດໃນກຸງເຢລູຊາເລັມ? ________________

| |
|---|
| ໃຫ້ຂຽນຄຳນັ້ນ ກ່ອນ ໂຢຮັນ 7:10 |

**42** ໃຫ້ທ່ານເປີດຫຼັກສູດມັດທາຍ ເຫຼັ້ມທີ 4 ໜ້າປົກບົດທີ 17 ໜ້າ 162. ແລ້ວຕອບຄຳຖາມດັ່ງຕໍ່ໄປນີ້:

ກ. ພະເຢຊູເດີນທາງໄປກຸງເຢລູຊາເລັມໃນຍຸກທີ່ເສຍສະຫຼະຈັກເທື່ອ? ________________

ຂ. ແມ່ນຂ່າວປະເສີດເຫຼັ້ມໃດທີ່ບັນທຶກເລື່ອງເທດສະການທັງ 3 ທີ່ພະເຢຊູເຂົ້າແຂວງຢູດາ?

________________________________________

ຄ. ຂ່າວປະເສີດເຫຼັ້ມໃດກ່າວເຖິງການສະເດັດໄປກຸງເຢລູຊາເລັມທັງ 3 ເທື່ອທັງກ່າວເລື່ອງການຊົງປ່າວປະ ກາດໃນຟາກແມ່ນ້ຳຢໍດາເນໃນແຂວງເປີເລຍດ້ວຍ? __________

ງ. ທີ່ພະເຢຊູສະເດັດໄປກຸງເຢລູຊາເລັມນັ້ນຕົກໃນຍຸກໃດ? ____________________

<u>ການປ່າວປະກາດໃນແຂວງຢູດາຕາມຄຳບັນທຶກຂອງໂຢຮັນ</u>

**43** ແຕ່ລະເທື່ອທີ່ພະອົງໄປກຸງເຢລູຊາເລັມ ພະອົງໄປເທດສະການໃດແດ່?
(ເບິ່ງຫຼັກສູດເຫຼັ້ມທີ 4 ກໍໄດ້)

ກ. ເທດສະການ ____________________________________

ຂ. ເທດສະການ ____________________________________

ຄ. ເທດສະການ ____________________________________

**44** ນອກຈາກນັ້ນພະເຢຊູໄປບ້ານໃດໂດຍສະເພາະ? ________________________

<u>ການປະກາດໃນແຂວງເປີເລຍຕາມຄຳບັນທຶກຂອງ ລູກາ</u>

**45** ລູກາລາຍງານເລື່ອງການປ່າວປະກາດໃນແຂວງເປີເລຍ. ເພິ່ນບອກເຫດການຫຼາຍປະການທີ່ຂ່າວປະເສີດເຫຼັ້ມ ອື່ນໆ ບໍ່ບອກ.

ກ. ທີ່ພະອົງຈະໄປເທດສະການຕັ້ງທັບອາໄສ ແມ່ນຊາວໃດບໍ່ຍອມຕ້ອນຮັບພະອົງ
(ລູກາ 9:51-53) ____________________________________

ຂ. ໃນ ລູກາ 10:25-37 ພະເຢຊູຍົກຄຳອຸປະມາເລື່ອງຫຍັງ? __________________

ຄ. ທີ່ຈະໄປສະເທດສະການຫຼອງພະວິຫານ ພະອົງກ່າວຄຳອຸປະມາໃດ
ໃນ ລູກາ 15:11-32? ________________________________

ງ. ເມື່ອພະອົງຈະໄປເທດສະການປັດສະຄາໃນ ລູກາ19:1-10ບັນທຶກເລື່ອງຫຍັງ?
____________________ ໃນເມືອງໃດ? ____________________

*ມີແຕ່ ລູກາເຫຼັ້ມດຽວທີ່ບັນທຶກເລື່ອງເຫຼົ່ານັ້ນ*

**46** ໂຢຮັນລາຍງານເລື່ອງເທດສະການທັງ 3 ນັ້ນດ້ວຍ ແຕ່ເພິ່ນກ່າວແຕ່ເລື່ອງໃນກຸງເຢລູຊາເລັມ.

ກ. ແມ່ນລູກາ ຫຼືໂຢຮັນ ທີ່ກ່າວເລື່ອງຊາວຊາມາເລຍທີ່ບໍ່ຍອມຕ້ອນຮັບພະອົງ? ____________

ຂ. ເຫຼັ້ມໃດບັນທຶກຄຳອຸປະມາເລື່ອງໄທຊາມາເລຍຜູ້ໃຈດີ? ________________________

ຄ. ເລື່ອງເທດສະການຕັ້ງທັບອາໄສໃນກຸງເຢລູຊາເລັມ? ________________________



ງ. ໃຜບັນທຶກຄຳອຸປະມາເລື່ອງລູກທີ່ເສຍ? ______________________________

ຈ. ເລື່ອງເຫດສະການສະຫຼອງພະວິຫານໃນກຸງເຢລູຊາເລັມ? ____________________

ສ. ພະເຢຊູກັບຊັກຂາຍໃນເຢລີໂກ? ______________________________________

**47** ກ. ຂ່າວປະເສີດເຫຼັ້ມໃດທີ່ບັນທຶກເລື່ອງເຫດສະການທັງ 3 ໃນກຸງເຢລູຊາເລັມ ແລະກ່າວເລື່ອງການປ່າວປະ ກາດໃນແຂວງຢູດາ? ______________________________

ຂ. ເຫຼັ້ມໃດບັນທຶກເລື່ອງເຫດສະການທັງ 3 ໃນກຸງເຢລູຊາເລັມແລະເລື່ອງການປ່າວປະກາດໃນແຂວງເປີເລຍ? ______________________________________________

**48** ມັດທາຍບັນທຶກແຕ່ເລື່ອງເຫດການ 7 ປະການ ໃນ ມທ ບົດທີ 19 ແລະບົດທີ 20. ໃຫ້ທ່ານຈົດທັງ 7 ປະການນັ້ນໄວ້: (ເບິ່ງກໍໄດ້)

ກ. ____________________________ ຂ. ____________________________

ຄ. ____________________________ ງ. ____________________________

ຈ. ____________________________ ສ. ____________________________

ຊ. ____________________________

<u>ອາທິດສຸດທ້າຍ</u>



**49** ຂ່າວປະເສີດທັງ 4 ເຫຼັ້ມບັນທຶກເລື່ອງເຫດສະການປັດສະຄາໃນອາທິດສຸດທ້າຍ ກ່ອນພະອົງຈະຕາຍ. ເພາະເຫດນັ້ນ ເຮົາຮູ້ຢ່າງລະອຽດກ່ຽວກັບເຫດສະການນັ້ນ.

ກ. ໃນຕົ້ນອາທິດນັ້ນພະອົງເຂົ້າກຸງໃດຢ່າງມີໄຊ? _______

ຂ. ການເຂົ້າກຸງຢ່າງມີໄຊຕົກໃນວັນໃດ? ___________

| | | |
|---|---|---|
| ຖ້າຍັງບໍ່ໄດ້ຂຽນເທື່ອ ໃຫ້ທ່ານຂຽນຄຳວ່າ "ອາທິດສຸດທ້າຍ" | | |
| ໃນ ພະຄຳພີກ່ອນ | ມທ 21:1 | ມລກ 11:1 |
| | ລກ 19:28 | ຢຮ 12:12 |

**50** ກ. ໃນອາທິດສຸດທ້າຍ ພະອົງຢູ່ໃນອຸບໂມງວັນໃດ? ______________________

ຂ. ໂຕ້ຖຽງໃນພະວິຫານວັນໃດ? ______________________________________

ຄ. ຕັ້ງສິນມະຫາສະ ນິດວັນໃດ? _________



ງ. ຢູດາທໍລະຍົດພະອົງວັນໃດ? _________

ຈ. ຊົງຊໍາລະພະວິຫານວັນໃດ? __________

ສ. ເຂົ້າກຸງຢ່າງຜູ້ມີໄຊວັນໃດ? __________

ຊ. ຖືກພິພາກສາ ແລະຄຶງໄວ້ວັນໃດ? ______

**51** ໂຢຮັນ ບົດ 13 ເຖິງບົດ 17 ບັນທຶກເລື່ອງທີ່ພະອົງ ເທດສະໜາໃຫ້ພວກສາວົກຟັງ.

ກ. ໃນວັນໃດ? ______________________________________________

ຂ. ບ່ອນໃດ? ______________________________________________

**52** ສະໄໝປີທີ່ສຳເລັດສິ້ນສຸດລົງໃນວັນສຸກທີ່ພະອົງຖືກຄຶງໄວ້ທີ່ໄມ້ກາງແຂນແລະສະໄໝທີ່ຄືນຈາກຕາຍເລີ້ມຕົ້ນໃນ ວັນອາທິດ. ເທດການທັງສອງປະການນັ້ນຕົກໃນອາທິດດຽວຄືໃນເທດສະການໃດ? ______________________________________________

| |
|---|
| ໃຫ້ທ່ານຂີດສີແດງກ້ອງຄຳ "ປັດສະຄາ" ໃນໂຢຮັນ 19:14 ແລ້ວຂຽນຄຳ "ປັດສະຄາ ທີ 4" ໃສ່ຂອບເຈ້ຍໃນບ່ອນດຽວນັ້ນ. |

## ພະເຢຊູຄືນຈາກຕາຍແລ້ວ

ເຮົາຈະຮຽນເລື່ອງສະໄໝທີ່ຄືນຈາກຕາຍໃນຫຼັກສູດມັດທາຍເຫຼັ້ມທີ 6.

| |
|---|
| ໃຫ້ທ່ານຂຽນຄຳ "ສະໄໝຄືນຈາກຕາຍແລ້ວ" ກ່ອນຂໍ້ພະຄຳພີ ຕໍ່ໄປນີ້:<br>ມທ 28:1 ມລກ 16:1 ລກ 24:1 ແລະ ຢຮ 20:1 |

*ເຮົາຮຽນແລ້ວເລື່ອງເທດສະການປັດສະຄາ 4 ເທື່ອຕໍ່ກັນໄປ ຢູ່ໃນ ໂຢຮັນ 2:13 ໂຢຮັນ 5:1 ໂຢຮັນ 6:4 ແລະ ໂຢຮັນ 19:14.*

**53** ກ. ເທດສະການປັດສະຄາທຳອິດທີ່ເຂົ້າກັບເວລາພະອົງຊົງຊຳລະພະວິຫານເທື່ອທຳອິດກົງກັບການເລີ້ມຕົ້ນສະ ໄໝປີໃດ? ______________________________________

ຂ. ເທດສະການທີສອງ (ພະຄຳພີບໍ່ໄດ້ບອກຕາຍຕົວວ່າເປັນເທດສະການປັດສະຄາແຕ່ເຮົາກະວ່າອາດຈະແມ່ນ) ກົງກັບການເລີ້ມຕົ້ນສະໄໝປີໃດ? ______________________

ຄ. ເທດສະການທີ 3 ໃນເມື່ອພະອົງຊົງລ້ຽງ 5000 ຄົນຖືກກັບເວລາເລີ້ມຕົ້ນສະໄໝປີໃດ? ______________________________________________

ງ. ເທດສະການສຸດທ້າຍຄືເທດສະການທີ 4 ເລີ້ມຕົ້ນສະໄໝໃດ? ______________________________________________

*ທ່ານໄດ້ຮຽນເລື່ອງຊີວິດຂອງພະເຢຊູມາເຖິງປານນີ້ ແຕ່ບໍ່ຮູ້ໝົດເທື່ອ. ທ່ານສົມຄວນຈະຮຽນເລື່ອງຄຳສອນ ຂອງພະເຢຊູຕະຫຼອດຊີວິດໂດຍອ່ານທາງບົດຮຽນອື່ນໆແລະໂດຍການປະຕິບັດຕາມການສອນຂອງພະເຢຊູ ໃນຊີວິດປະຈຳວັນຖ້າທ່ານຈະສອນຄົນອື່ນທ່ານຕ້ອງຮຽນຮູ້ຢູ່ສະເມີບໍ່ຂາດ. ຈາກນີ້ຕໍ່ໄປທ່ານຈະຮຽນກ່ຽວກັບສະໄໝຫຼັງຈາກພະເຢຊູຄືນຂຶ້ນຈາກຕາຍແລະກິດຈະການຂອງພວກອັກຄະສາວົກຂອງພະອົງໃນຫຼັກສູດມັດທາຍເຫຼັ້ມທີ 6.*

*ໃຫ້ທ່ານເປີດເສັງບົດທີ 25 ນີ້ ແລ້ວຕຽມຕົວໄວ້ເພື່ອການເສັງຈົບມັດທາຍເຫຼັ້ມທີ 5!*

## ຄໍາຕອບ:

**1** ກ. ມັດທາຍ ບົດ 1 ຂ. ລູກາ ບົດ 1

**2** ກ. ລູກາ ຂ. ມັດທາຍ

**3** ກ. ນາຊາເລັດ ຂ. 3 ເດືອນ ຄ. ເອລີຊາເບັດ ງ. ຢູດາ ຈ. ລູກາ ສ. ໂຢຮັນ

**4** ກ. ລູກາ ຂ. ລູກາ ຄ. ລູກາ ງ. ມັດທາຍ ຈ. ມັດທາຍ

**5** ກ. ພະທໍາ ຂ. ພະເຈົ້າ ຄ. ຕົ້ນເດີມ ງ. ພະເຈົ້າ ຈ. ພະກໍາເນີດ

**6** ກ. ພະເຢຊູ ຂ. ມັດທາຍ ແລະ ລູກາ

**7** ກ. ໂຢຮັນ ຂ. ລູກາ ຄ. ລູກາ ງ. ລູກາ ຈ. ມັດທາຍ ສ. ມັດທາຍ

**8** ຢ່າງນ້ອຍເດືອນກວ່າ

**9** ກ. ລູກາ ຂ. ມັດທາຍ

**10** ກ. ລູກາ ຂ. ລູກາ ຄ. ລູກາ ງ. ລູກາ ຈ. ມັດທາຍ ສ. ມັດທາຍ

**11** ກ. ລູກາ ບົດ 2 ກ່ອນ ຂ. ມາລະໂກ ແລະ ໂຢຮັນ

**12** ກ. ລູກາ ຂ. 12 ປີ ຄ. ມັດທາຍ ມາລະໂກ ແລະ ໂຢຮັນ

**13** ກ. ໂຢຮັນ ຂ. ລູກາ ຄ. ລູກາ ງ. ລູກາ ຈ. ມັດທາຍ ສ. ມັດທາຍ ຊ. ລູກາ ຍ. ລູກາ ດ. ລູກາ ຕ. ລູກາ ຖ. ມັດທາຍ ທ. ມັດທາຍ ນ. ລູກາ

**14** ກ. ຍໍດາເນ ຂ. ໂຢຮັນບັບຕິສະໂຕ ຄ. ຢູດາ ແລະອີຕູລາຍ

**15** ກ. ໂຢຮັນບັບຕິສະໂຕ ຂ. ບັບຕິສະມາ ຄ. ພະເຢຊູ ງ. ຄໍາເທດສະໜາຂອງໂຢຮັນບັບຕິສະໂຕ

**16** ຄໍາເທດສະໜາຂອງ ໂຢຮັນບັບຕິສະໂຕ

**17** ປັດສະຄາ

**18** ໄທນາຊາເລັດບໍ່ຕ້ອນຮັບພະອົງ

**19** ກ. ບໍ່ ຂ. ບັນທຶກ ຄ. ບອກ ງ. ບໍ່

**20** ກ. ຄໍາເທດສະໜາຂອງໂຢຮັນບັບຕິສະໂຕ ຂ. ພະອົງຊົງຮັບບັບຕິສະມາ ຄ. ການທົດລອງຂອງພະອົງ

**21** ກ. ຄໍາເທດສະໜາຂອງໂຢຮັນ ຂ. ໂຢຮັນ ຄ. 1 - 4 ງ. ໄທນາຊາເລັດບໍ່ຕ້ອນຮັບພະເຢຊູ ຈ. ລູກາ

**22** ກ. ນາຊາເລັດ ຂ. ກາເປນາອູມ ຄ. ຄາລີເລ ງ. ຄາລີເລ ຈ. ເຮໂລດຜູ້ປົກຄອງເມືອງ (ອັນຕິປາ) ສ. ໂຢຮັນບັບຕິສະໂຕ ຊ. ຍໍດາເນ ຍ. ຄາລີເລ ດ. ສະຫວັນ

**23** ກ. ໂຢຮັນຖືກຂັງໄວ້ໃນຄຸກ ຂ. ພະອົງຈາກນາຊາເລັດໄປຢູ່ກາເປນາອູມ

**24** ກ. ກຸງເຢລູຊາເລັມ ຂ. ເທດສະການ ຄ. ບໍ່

**ຄຳຕອບ (ຕໍ່):**

**25** *ເບດຊະທາ*

**26** *ກ. 5:1 ຂ. ປີທີ່ມີຊື່ສຽງ*

**27** *ກ. ໂຢຮັນ ຂ. ລູກາ ຄ. ລູກາ ງ. ລູກ ຈ. ມັດທາຍ ສ. ມັດທາຍ*
*ຊ. ລູກາ ຍ. ລູກາ ດ. ລູກາ ຕ. ລູກາາ ຖ. ມັດທາຍ ທ. ມັດທາຍ*
*ນ. ລູກາ*

**28** *ກ. ທັງ 4 ຂ. 3 ທຳອິດ ຄ. 3 ທຳອິດ ງ. ລູກາ ຈ. ໂຢຮັນ ສ. 3 ທຳອິດ*

**29** *ຍຸກທີ່ພະອົງຖອຍອອກ ຍຸກທີ່ພະອົງເສຍສະຫຼະ*

**30** *ກ. ກາເປນາອູມ ຂ. ຄາລີເລ ຄ. ຍຸກທີ່ຖອຍອອກ*

**31** *ກ. ກາເປນາອູມ ແລະ ຄາລີເລ ຂ. ທີ່ພະອົງຖອຍອອກ ຄ. ປີທີ່ສຳເລັດ*
*ງ. ຍຸກທີ່ພະອົງເສຍສະຫຼະ*

**32** *ກ. ຖອຍອອກ ຂ. ກາເປນາອູມ ຄ. ຍຸກທີ່ເສຍສະຫຼະ ງ. ເຢລູຊາເລັມ*

**33** *ກ. ແດງ ຂ. "ຈ"*

**34** *ກ. ສີຟ້າ ຂ. "ກ"*

**35** *ກ. ສີຂຽວ ຂ. "ຄ" ຄ. "ຂ"*

**36** *ກ. ຊາອີດາ ຂ. ພອຍນິເກ ຄ. ຊາເລຍຟີລິບປອຍ... ເຣໂມນ ງ. ຊາອີດາ*
*ຈ. ກາຍຊາເລຍຟີລິບປອຍ... ພູເຣໂມນ ສ. ເບັດຊາອີດາ*

**37** *ເບັດຊາອີດາ*

**38** *ກ. ປັດສະຄາ ຂ. ເຈາແຜ່ນດິນ ຄ. ອາຫານທິບແຫ່ງຊີວິດ*
*ງ. ທີ່ຖອຍບໍ່ຕິດຕາມພະອົງ*

**39** *ກ. ເບັດຊາອີດາ ຂ. ລ້ຽງ 5000 ຄົນ ຄ. ປັດສະຄາ*

**40** *ກ. ທັງສອງ ຂ. ທັງສອງ ຄ. ການລ້ຽງ 5000 ຄົນ*

**41** *ກ. ຢູດາ ຂ. ເຢລູຊາເລັມ ຄ. ປັດສະຄາ*

**42** *ກ. 3 ຂ. ໂຢຮັນ ຄ. ລູກາ ງ. ຍຸກເສຍສະຫຼະ*

**43** *ກ. ຕັ້ງທັບອາໄສ ຂ. ສະຫຼອງພະວິຫານ ຄ. ປັດສະຄາ*

**44** *ເບດທາເນຍ*

**45** *ກ. ຊາມາເລຍ ຂ. ໄທຊາມາເລຍຜູ້ໃຈດີ ຄ. ເລື່ອງລູກທີ່ເສຍ*
*ງ. ພະເຢຊູກັບຊັກຂາຍ; ເຢລີໂກ*

**46** *ກ. ລູກາ ຂ. ລູກາ ຄ. ໂຢຮັນ ງ. ລູກາ ຈ. ໂຢຮັນ ສ. ລູກາ*

**47** *ກ. ໂຢຮັນ ຂ. ລູກາ*

**48** *ກ. ສອນເລື່ອງລັກສະນະຜົວເມຍ ຂ. ອ່ວຍພອນເດັກນ້ອຍ*
*ຄ. ເລື່ອງເສດຖີໜຸ່ມ ງ. ຄົນທຳງານໃນສວນອະງຸ່ນ ຈ. ທຳນວາຍເຖິງຄວາມຕາຍ*
*ສ. ຄຳຂໍຂອງຢາໂກໂບແລະໂຢຮັນ ຊ. ໂຜດສອງຄົນຕາບອດ*

**ຄໍາຕອບ (ຕໍ່):**

**49** *ກ. ເຢລູຊາເລັມ ຂ. ວັນອາທິດ*

**50** *ກ. ເສົາ ຂ. ອັງຄານ ຄ. ພະຫັດ ງ. ພຸດ ຈ. ຈັນ ສ. ອາທິດ ຊ. ສຸກ*

**51** *ກ. ວັນພະຫັດ ຂ. ຫ້ອງຊັ້ນເທິງ*

**52** *ປັດສະຄາ*

**53** *ກ. ຫຼຽມຕົວ ຂ. ມີຊື່ສຽງ ຄ. ປີທີ່ສໍາເລັດ ງ. ທີ່ພະອົງຄືນຈາກຕາຍແລ້ວ*